## ຂ້ອຍຈະເລືອກເອົາ AFH ໄດ້ແນວໃດ?

ບຸກຄົນ ແລະ ຄອບຄົວຂອງເຂົາເຈົ້າ ຫລື ຜູ້ຕາງຫນ້າຕາມກົດຫມາຍ ເລືອກເອົາຜູ້ບໍລິການ. ຜູ້ບໍລິການຕ້ອງຖືກແຕ່ງຕັ້ງໃຫ້ເປັນເຮືອນພິເສດຂອງ DD ແລະ ຖືກອອກໃບອະນຸຍາດໃຫ້ໂດຍກົມ DSHS. DDA ຕ້ອງອະນຸຍາດການຈັດຫາໃຫ້ຢູ່ກ່ອນທີ່ທ່ານຈະຍ້າຍເຂົ້າໄປຢູ່.

## ຂ້ອຍສາມາດຊອກເອົາຣາຍຣະອຽດເພີ້ມເຕີມກ່ຽວກັບ AFHs ໄດ້ແນວໃດ?

- ທ່ານສາມາດໂທຫາຫ້ອງການ DDA ທ້ອງຖິ່ນຂອງທ່ານ ແລະ ຂໍເວົ້າ ນຳຜູ້ຈັດການຊ່ວຍເຫລືອເອກສານຂອງທ່ານ.
- ທ່ານສາມາດປຶກສານຳ Long Term Care Ombudsman Program ໄດ້ທີ່ເລກ 1-800-562-6028 ຫລື ແວ່ເຂົ້າຢ້ຽມແວບໄຊທ໌ຂອງເຂົາເຈົ້າໄດ້ທີ່: www.ltcop.org
- ທ່ານສາມາດແວ່ເຂົ້າຢ້ຽມແວບໄຊທ໌ຂອງ ALTSA ໄດ້ທີ່ www.altsa.dshs.wa.gov/pubinfo/housing/other/#AFH




## ຫ້ອງການ DDA ຕັ້ງຢູ່ໃສ?




**ຫ້ອງຖິ່ນ 1**
**1-800-462-0624**
TTY (509) 568-3038
1611 W. Indiana Ave.
Spokane, WA 99205-4221
ໂທລະສັບ (509) 329-2900

**ຫ້ອງຖິ່ນ 2**
**1-800-788-2053**
TTY (360) 714-5002
840 N. Broadway
Bldg. A., Suite 100
Everett, WA 98201-1288
ໂທລະສັບ (425) 339-4833

**ຫ້ອງຖິ່ນ 3**
**1-800-248-0949**
TTY (253) 572-7381
1305 Tacoma Ave. S.
Suite 300
Tacoma, WA 98402
ໂທລະສັບ (253) 404-5500

**ຫ້ອງຖິ່ນ 1**

**1-800-822-7840**
TTY (509) 454-4321
3700 Fruitvale Blvd.
Suite 200
Yakima, WA 98909-2500
ໂທລະສັບ (509) 225-4620

**ຫ້ອງຖິ່ນ 2**
**1-800-314-3296**
TTY (206) 720-3325
1700 E. Cherry St. #200
Seattle, WA 98122
ໂທລະສັບ (206) 568- 5700

**ຫ້ອງຖິ່ນ 3**
**1-800-339-8227**
TTY (360) 586-4719
Point Plaza East
Bldg. 2, 3rd Floor
6860 Capitol Blvd. SE
Olympia, WA 98504-5315
ໂທລະສັບ (360) 725-4250

Washington State Department of Social & Health Services
*Transforming lives*

DSHS 22-442 LA (Rev. 8/17) Laotian

# ເຮືອນຄອບຄົວຜູ້ໃຫຍ່ (AFH)

ການອູ້ມຊູ ແລະ ການບໍລິການຂອງພະແນກ
**Developmental Disabilities Administration**



Washington State Department of Social & Health Services
*Transforming lives*

## ເຮືອນຄອບຄົວຜູ້ໃຫຍ່ (AFH) ແມ່ນຫຍັງ?

ເຮືອນຄອບຄົວຜູ້ໃຫຍ່ (AFH) ເປັນບ່ອນຢູ່ອາສັຍທີ່ເປັນເຈົ້າຂອງ ຫລື ຖືກເຊົ່າໂດຍຜູ້ບໍລິການທີ່ຖືກອະນຸຍາດ. ມັນຈະເອົາຫ້ອງກິນ ແລະ ນອນໃຫ້, ການຄວບຄຸມເບິ່ງນຳຕະລອດ 24 ຊົ່ວໂມງ, ແລະ ການເບິ່ງແຍງດູແລສ່ວນຕົວສຳລັບຜູ້ໃຫຍ່ 2 ຫາ 6 ຄົນ, ອາຍຸ 18 ປີ ຫລືແກ່ກວ່າ. ເຮືອນໄດ້ຖືກອະນຸຍາດ ແລະ ບົ່ງຣະບຽບການໂດຍຜະແນກ Residential Care Services (RCS) ແລະ ຜະແນກ DSHS Aging and Long Term Support Administration (ALTSA).

## ແມ່ນໃຜອາສັຍຢູ່ເຮືອນຄອບຄົວຜູ້ໃຫຍ່?

AFHs ມີໄວ້ໃຫ້ແກ່ບຸກຄົນຜູ້ທີ່ມີເງື່ອນໄຂໄດ້ຮັບ Developmental Disabilities Administration (DDA) ອາຍຸ 18 ປີ ແລະ ແກ່ກວ່າຜູ້ທີ່ຕ້ອງການການເບິ່ງແຍງດູແລ, ການອູ້ມຊູ, ແລະ ການ ຄວບຄຸມເບິ່ງນຳ. ຜູ້ອາສັຍຢູ່ສາມາດຖືກອອກເງິນທຶນໃຫ້ໂດຍຜ່ານ DSHS (Medicaid) ຫລື ການຈ່າຍເງິນໂດຍເອກຊົນ. ຄົນຫລາຍ ກວ່າ 1,600 ຄົນຜູ້ທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບຕົວ ອາສັຍຢູ່ໃນ AFHs ຢູ່ໃນຣັດວໍຊິງຕັນ.

## ການຝຶກຝົນແນວໃດແດ່ຕ້ອງມີສຳລັບຜູ້ບໍຣິການ ແລະ ຜູ້ເບິ່ງແຍງ ດູແລ AFH?

ຜູ້ບໍຣິການ AFHs ທຸກໆຄົນຕ້ອງສອດຄ່ອງນຳກົດກຳນົດຂອງການ ມີໃບອະນຸຍາດ ແລະ ການຝຶກຝົນ (Chapter 388-76 WAC). ຜູ້ບໍຣິການທີ່ຖືກອະນຸຍາດ ແລະ ຜູ້ຈັດການສະຖານທີ່ຕ້ອງສຳເຣັດ ຫລັກສູດການຝຶກຝົນພິເສດຂອງຜະແນກຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕກ່ອນທີ່ຈະເຮັດວຽກນຳຄົນອາສັຍຢູ່ຜູ້ທີ່ມີຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ ([https://www.dshs.wa.gov/dda/events-and-training/events-and-training](https://www.dshs.wa.gov/dda/events-and-training/events-and-training)).

- DDA ເອົາໃຫ້ການຝຶກຝົນພິເສດ ແລະ ຄວາມຊ່ວຍເຫລືອດ້ານວິຊາການຢູ່ໃນເຮືອນໃຫ້.
- ພະນັກງານທ້ອງຖິ່ນຂອງ DDA ໃຫ້ການເບິ່ງນຳການຮັບປະກັນຄຸນນະພາບສຳລັບເຮືອນຢູ່.

ຜູ້ບໍຣິການ AFH ແລະ ຜູ້ເບິ່ງແຍງດູແລທຸກໆຄົນຖືກບົ່ງໃຫ້ສຳເຣັດ

- ກົດກຳນົດການຝຶກຝົນພາຍໄຕ້ກົດຫມາຍ Chapter 388-112 WAC.
- ການສຶກສາທີ່ດຳເນີນຕໍ່ໄປ 12 ຊົ່ວໂມງທຸກໆປີ.

## ການຝຶກຝົນເພີ້ມເຕີມແນວໃດແດ່ທີ່ຖືກສະເນີໃຫ້ແກ່ຜູ້ບໍຣິການ AFH ແລະ ຜູ້ເບິ່ງແຍງດູແລ?

ການສຶກສາທີ່ດຳເນີນຕໍ່ໄປຖືກບົ່ງໃຫ້ມີສຳລັບຜູ້ບໍຣິການ AFH ແລະ ຜູ້ເບິ່ງແຍງດູແລທຸກໆຄົນ. DDA ສະເນີການຝຶກຝົນຫລາຍໆແນວ ໃຫ້ໂດຍສະເພາະເຈາະຈົງໃສ່ບັນຫາເຣື່ອງຄວາມເສັຽອົງຄະ, ການອູ້ມຊູນຳການປະພຶດທີ່ດີ, ຫລື ຫົວເຣື່ອງອື່ນໆ. ການຝຶກຝົນເຫລົ່ານີ້ແມ່ນຟຣີບໍ່ເສັຽເງິນສຳລັບ AFH ແລະ ມີໄວ້ໃຫ້ໃນຫນ້າແວບເພຈ໌ DDA Provider Training Opportunities:

[https://www.dshs.wa.gov/dda/events-and-training/events-and-training](https://www.dshs.wa.gov/dda/events-and-training/events-and-training)

## DDA ຄາດຫມາຍແນວໃດແດ່ຈາກຜູ້ບໍຣິການ AFH ແລະ ຜູ້ເບິ່ງແຍງດູແລ?

DDA ຄາດຫມາຍໃຫ້ຜູ້ບໍຣິການ AFH ແລະ ຜູ້ເບິ່ງແຍງດູແລທຸກໆຄົນທີ່ຈະຮັບປະກັນວ່າຜູ້ອາສັຍຢູ່ແຕ່ລະຄົນມີປະສິບປະການ:

- ສຸຂະພາບ ແລະ ຄວາມປອດພັຍ;
- ຄວາມສາມາດທີ່ຈະຄວບຄຸມກຳກັບນຳກິຈກັມປະຈຳວັນ ແລະ ຕິດຕາມນຳເປົ້າຫມາຍສ່ວນຕົວ;
- ພະລັງ ແລະ ທາງເລືອກ;
- ສະພາບ ແລະ ການມີສ່ວນຊ່ວຍເຫລືອໂດຍຕົນເອງ ແລະ ຄົນອື່ນ;
- ການເຂົ້າຮ່ວມນຳໃນຊີວິດຮ່າງກາຍ ແລະ ສັງຄົມຢູ່ໃນຊຸມນຸມຊົນຂອງເຂົາເຈົ້າ; ແລະ
- ຄວາມສັມພັນນຳຫມູ່ເພື່ອນ ແລະ ຍາດພີ່ນ້ອງ.

## ການບໍຣິການແນວໃດແດ່ທີ່ຖືກເອົາໃຫ້ໂດຍ AFH?

ຜູ້ບໍຣິການ AFH ElA ຜູ້ເບິ່ງແຍງດູແລທຸກໆຄົນໄດ້ຖືກບົ່ງທີ່ຈະເອົາໃຫ້:

- ຫ້ອງຢູ່ກິນ ແລະ ນອນ;
- ການຄວບຄຸມເບິ່ງນຳຕະລອດ 24 ຊົ່ວໂມງ; ແລະ
- ຄວາມຊ່ວຍເຫລືອນຳການເບິ່ງແຍງດູແລສ່ວນຕົວຕາມທີ່ຖືກຊີ້ບອກຢູ່ໃນການຕີຣາຄາປະເມີນຜົນ CARE ຂອງຜູ້ອາສັຍຢູ່.

ູ້ອາສັຍຢູ່ແຕ່ລະຄົນຕ້ອງມີການປະເມີນຜົນອັນຄົບຖ້ວນ ແລະ ການຕີຣາຄາເບິ່ງການລາຍງານ (CARE) ຖືກເຮັດໃຫ້ແລ້ວໂດຍຜູ້ຈັດການຊ່ວຍເຫລືອເອກສານຂອງ DDA ກ່ອນການເຂົ້າມາຢູ່. ການຕີຣາຄາປະເມີນຜົນອັນນີ້ໄດ້ຖືກເຮັດນຳບຸກຄົນ ແລະ ຄອບຄົວຂອງເຂົາເຈົ້າ ຫລື ຜູ້ຕາງຫນ້າຕາມກົດຫມາຍ. ການປະເມີນຜົນບອກຣາຍຣະອຽດກ່ຽວກັບຄວາມຕ້ອງການນຳການອູ້ມຊູຂອງບຸກຄົນ ແລະ ຄວາມຊອບໃຈນຳການບໍຣິການ, ແລະ ຍັງພິຈາຣະນາບອກອີກຄືກັນເຖິງຣະດັບຂອງການເບິ່ງແຍງດູແລ ແລະ ອັດຕຣາສຳລັບການບໍຣິການ. ການປະເມີນຜົນອັນນີ້ ແລະ ແຜນການບໍຣິການຕ້ອງໄດ້ຖືກກວດເບິ່ງຄືນແຕ່ລະປີດ້ວຍການສຳພາດໂດຍຕົນເອງນຳຜູ້ຈັດການຊ່ວຍເຫລືອເອກສານຂອງ DDA. ຜູ້ຈັດການຊ່ວຍເຫລືອເອກສານຂອງ DDA ຕ້ອງຢ້ຽມຢາມເຮືອນໃນເວລາຕ່າງໆຖ້າຫາກວ່າການປະເມີນຜົນບໍ່ໄດ້ຖືກເຮັດໃຫ້ແລ້ວຢູ່ໃນເຮືອນ.

ນອກຈາກນັ້ນອີກ, ຜູ້ບໍຣິການ AFH ໄດ້ຖືກບົ່ງໃຫ້ຂຽນປະກອບແຜນ ການເບິ່ງແຍງດູແລທີ່ຖືກຕໍ່ລອງກັນ. ອັນນີ້ແມ່ນແຜນ ການເບິ່ງແຍງດູແລສ່ວນບຸກຄົນທີ່ໄດ້ຖືກເຮັດອອກມານຳບຸກຄົນ ແລະ ຄອບຄົວ ຫລື ຜູ້ຕາງຫນ້າຕາມກົດຫມາຍຂອງບຸກຄົນນັ້ນ. ແຜນ ການເບິ່ງແຍງດູແລທີ່ຖືກຕໍ່ລອງກັນລວມເອົາການບໍຣິການ ແລະ ກິຈກັມທີ່ຖືກເຈຣະຈາຕໍ່ລອງກັນຣະຫວ່າງບຸກຄນ ແລະ ຜູ້ບໍຣິການ, ເຊັ່ນວ່າ:

- ການຊ່ວຍເຫລືອນຳການເອົາພາລະກິດຂອງການເບິ່ງແຍງດູແລສ່ວນຕົວໃຫ້; ແລະ
- ການເຂົ້າເຖິງກິຈກັມຕາມຊຸມນຸມຊົນ, ຫມາຍນັດພົບຫມໍ, ແລະ ການຂົນສົ່ງໄປມາ.

## ແມ່ນໃຜຈ່າຍສຳລັບການບໍຣິການ AFH?

ຜູ້ອາສັຍຢູ່ຕ້ອງມີສ່ວນຮ່ວມນຳໄປໃສ່ຄ່າຂອງຫ້ອງກິນນອນຈາກຣາຍໄດ້ຂອງເຂົາເຈົ້າເອງ. DSHS ຈ່າຍສ່ວນທີ່ຍັງເຫລືອໂດຍອີງຕາມຣະດັບຂອງຄວາມຕ້ອງການທີ່ຖືກປະເມີນຜົນເບິ່ງແລ້ວຂອງແຕ່ລະຄົນ.

## ແມ່ນໃຜຄວບຄຸມເບິ່ງນຳການບໍຣິການ AFH?

**DDA ເອົາໃຫ້:**

- ການຄວບຄຸມກຳກັບນຳເອກສານ, ລວມທັງການປະເມີນຜົນ CARE ໂດຍຕົນເອງປະຈຳປີ.
- ຜູ້ຊ່ຽວຊານການປະຕິບັດງານທ້ອງຖິ່ນ ແລະ ການສົ່ງເສີມສຸຂະພາບຈະຢ້ຽມຢາມ AFHs ເພື່ອຈະປະເມີນຜົນຄຸນນະພາບຂອງການບໍຣິ ການ ແລະ ເພື່ອຈະເອົາການປຶກສາ ແລະ ການຝຶກຝົນໃຫ້.
- ນາຍພະຍາບານຜ່ານການຮັບຮອງອາດຈະຢ້ຽມຢາມ AFHs ເພື່ອຈະປະເມີນຜົນແຜນການບໍຣິການ ແລະ ຈະເອົາການປຶກສາ ແລະ ການຝຶກຝົນໃຫ້ຜູ້ບໍຣິການ ແລະ ຜູ້ເບິ່ງແຍງດູແລ.

**RCS ເອົາໃຫ້:**

- ການອອກໃບອະນຸຍາດ ແລະ ການຄວບຄຸມເບິ່ງນຳ AFHs ທຸກໆບ່ອນ.
- ຜູ້ອອກໃບອະນຸຍາດທຳການຢ້ຽມຢາມໂດຍບໍ່ໄດ້ແຈ້ງລ່ວງຫນ້າໄປຫາ AFH ທີ່ຖືກອະນຸຍາດແຕ່ລະບ່ອນຢ່າງຫນ້ອຍທຸກໆ 18 ເດືອນ.
- ການຕິດຕາມນຳການລ່ວງລະເມີດກົດຣະບຽບຂອງການອອກໃບອະນຸຍາດ, ຊຶ່ງອາດຈະເປັນຜົນເຖິງການຝຶກຝົນເພີ້ມເຕີມ, ການປຶກສາ,ການປັບໄຫມ, ການຢຸດການຈັດຫາໃຫ້ຢູ່, ຫລື ການຕັດໃບອະນຸຍາດ, ການຍົກເລີກ, ຫລື ການຢຸດໄວ້ກ່ອນຊົ່ວຄາວ.
- ການກ່າວຫາເຣື່ອງການກົດຂີ່ຂົ່ມເຫັງຈະຖືກສົ່ງຕໍ່ໄປຫາ Complaint Resolution Unit (CRU) ແລະ ພະນັກງານຂອງ RCS ຈະຖືກແຕ່ງຕັ້ງໃຫ້ສືບສວນຕາມທີ່ຕ້ອງການ. RCS ຍັງຈະສືບສວນຄຳຮ້ອງທຸກກ່ຽວກັບການກົດຂີ່ຂົ່ມເຫັງທີ່ຖືກໂທເຂົ້າມາຫາສາຍດ່ວນຂອງ CRU ໄດ້ທີ່ເລກ 1-800-562-6078.

